## ມິຊຊາອາທິດທີ 13 ການົດທຳມະດາປີ A
## ວັນທີ 28 ມິຖຸນາ 2020



**ພຣະວໍລະສານໂດຍນັກບຸນມັດເທວ 10, 37-42**

ໃນເວລານັ້ນ ພຣະເຢຊູເຈົ້າຊົງກ່າວແກ່ພວກສາວົກວ່າ: “ຜູ້ໃດຮັກພໍ່ ຫລືແມ່ລື່ນເຮົາ ບໍ່ສົມກັບເຮົາ. ຜູ້ໃດຮັກລູກຊາຍ ຫລືລູກສາວລື່ນເຮົາ ກໍບໍ່ສົມກັບເຮົາດ້ວຍ. ຜູ້ໃດບໍ່ຍອມແບກກາງເຂນ ແລະຕິດຕາມເຮົາມາ, ກໍບໍ່ສົມກັບເຮົາ. ຜູ້ໃດຮັກສາຊີວິດຂອງຕົນໄວ້, ຈະເສຍຊີວິດນັ້ນໄປ; ຜູ້ໃດຍອມສະລະຊີວິດຂອງຕົນ ຍ້ອນເຮົາ, ຈະພົບຊີວິດນັ້ນເສຍໃໝ່.”

“ຜູ້ໃດຕ້ອນຮັບພວກເຈົ້າ, ກໍແມ່ນຕ້ອນຮັບເຮົາເອງ; ແລະຜູ້ໃດຕ້ອນຮັບເຮົາ, ກໍແມ່ນຕ້ອນຮັບຜູ້ທີ່ໄດ້ຊົງໃຊ້ເຮົາມາ. ຜູ້ໃດຕ້ອນຮັບປະພາສົກ ໃນຖານະເປັນປະພາສົກ, ຈະໄດ້ຮັບບຳເໜັດ ຢ່າງປະພາສົກ; ຜູ້ໃດຕ້ອນຮັບຜູ້ຊອບທຳ ໃນຖານະເປັນຜູ້ຊອບທຳ, ຈະໄດ້ບຳເໜັດ ຢ່າງຜູ້ຊອບທຳດ້ວຍ. ເຮົາກ່າວແກ່ພວກເຈົ້າເປັນຄວາມຈິງວ່າ: ຜູ້ໃດໃຫ້ນ້ຳເຢັນພຽງແຕ່ຈອກດຽວ ແກ່ຄົນໜຶ່ງ ໃນຜູ້ນ້ອຍເຫລົ່ານີ້ ໃນຖານະ ເປັນລູກສິດຂອງເຮົາ, ຜູ້ນັ້ນຈະບໍ່ຂາດລາງວັນເລີຍ.”

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ: ມທ 10, 37-42**

ອາທິດທີ່ຜ່ານມາວາຈາພຣະເຈົ້າຢູ່ໃນບໍລິບົດຂອງຄຳແນະນຳສັ່ງສອນຂອງພຣະເຢຊູເຈົ້າຕໍ່ພວກລູກສິດສິບສອງຄົນກ່ອນທີ່ພຣະອົງຈະສົ່ງພວກເຂົາໄປເພື່ອສືບຕໍ່ພາລະກິດຂອງພຣະອົງໃນການປະກາດຂ່າວດີໃຫ້ແກ່ນານາຊາດ. ພຣະເຢຊູເຈົ້າໄດ້ກ່າວກັບພວກລູກສິດວ່າ: “ຢ່າຢ້ານກົວເລີຍ” ຄົນທີ່ຂ້າໄດ້ແຕ່ກາຍແຕ່ບໍ່ສາມາດຂ້າວິນຍານໄດ້. ແຕ່ຈົ່ງຢ້ານກົວຄົນທີ່ຂ້າໄດ້ທັງກາຍແລະວິນຍານ. ເພາະຄວາມຢ້ານກົວເປັນສິ່ງທີ່ທຳໃຫ້ພວກລູກສິດຂາດຄວາມເຊື່ອໝັ້ນໃນຜູ້ທີ່ສາມາດຊ່ວຍພວກເຂົາໃຫ້ຣອດໄດ້ຄືພຣະບິດາເຈົ້າສະຫວັນ.

ວັນອາທິດນີ້ວາຈາພຣະເຈົ້າກໍຍັງຢູ່ໃນບໍລິບົດຄຳສັ່ງສອນຂອງພຣະເຢຊູເຈົ້າຕໍ່ພວກລູກສິດກ່ອນທີ່ພຣະອົງຈະສົ່ງພວກເຂົາໄປ. ພຣະອົງກ່າວກັບພວກເຂົາວ່າ: “ຜູ້ໃດຮັກພໍ່ຫລືແມ່ລື່ນເຮົາ, ບໍ່ສົມກັບເຮົາ. ຜູ້ໃດຮັກລູກຊາຍຫລືລູກສາວລື່ນເຮົາ, ກໍບໍ່ສົມກັບເຮົາດ້ວຍ”. ພວກເຮົາຈະເຂົ້າໃຈວາຈາຂອງພຣະເຢຊູເຈົ້າຕອນນີ້ຢ່າງໃດ? ຄຳສອນຂອງພຣະເຢຊູເຈົ້າຕອນນີ້ບໍ່ໄດ້ຂັດກັບພຣະບັນຍັດຂອງໂມແຊທີ່ສອນພວກເຮົາໃຫ້ນັບຖືບິດາມານດາບໍ? ອັນທີ່ຈິງແລ້ວ ພຣະເຢຊູເຈົ້າບໍ່ໄດ້ຫ້າມພວກເຮົາໃຫ້ຮັກພໍ່ແມ່, ອ້າຍເອື້ອຍນ້ອງໃນຄອບຄົວຂອງພວກເຮົາ. ກົງກັນຂ້າມໃນບົດເທດບົນພູເຂົາກໍຄືໃນບົດໂອພຣະບິດາ ພຣະອົງໄດ້ສອນພວກເຮົາໃຫ້ຮັກກັນແລະກັນແມ່ນກະທັງສັດຕູຂອງພວກເຮົາດ້ວຍ. ຄວາມພົວພັນຮັກແພງຄອບຄົວຢູ່ໃນໂລກນີ້ເປັນສິ່ງທີ່ດີ. ແຕ່ສຳລັບຜູ້ທີ່ເປັນສິດຂອງພຣະເຢຊູເຈົ້າແລ້ວ, ຄອບຄົວທີ່ເຂົາຕ້ອງຮັກແພງບໍ່ແມ່ນແຕ່ພໍ່ແມ່ຜູ້ໃຫ້ກຳເນີດແລະອ້າຍເອື້ອຍນ້ອງທາງສາຍເລືອດຂອງເຂົາເທົ່ານັ້ນ, ແຕ່ແມ່ນທຸກຄົນທີ່ເຊື່ອໃນພຣະເຈົ້າ ຫລືເວົ້າອີກຢ່າງແມ່ນພຣະກຣິສຕະຈັກນັ້ນເອງ. ດັ່ງນັ້ນ, ຖ້າພວກລູກສິດຜູກພັນນຳຄອບຄົວທາງສາຍເລືອດຂອງພວກເຂົາຫລາຍກວ່າຄອບຄົວທາງຄວາມເຊື່ອອັນແມ່ນພຣະກຣິສຕະຈັກແລ້ວ, ພວກເຂົາກໍບໍ່ສົມເປັນສິດຂອງພຣະເຢຊູເຈົ້າ.

ພວກເຮົາຜູ້ເປັນກຣິສຕັງກໍເຊັ່ນດຽວກັນ. ພວກເຮົາໄດ້ເປັນສິດຂອງພຣະເຢຊູເຈົ້າຜ່ານທາງສິນລ້າງບາບ. ດັ່ງນັ້ນ, ພວກເຮົາບໍ່ໄດ້ມີແຕ່ຄອບຄົວຝ່າຍໂລກນີ້ເທົ່ານັ້ນ, ແຕ່ພວກເຮົາຍັງມີຄອບຄົວຝ່າຍຈິດອັນແມ່ນທຸກຄົນທີ່ເຊື່ອໃນພຣະເຈົ້າອົງດຽວກັບພວກເຮົາ. ແລະພວກເຮົາກໍມີພາລະກິດເໝືອນກັບພວກລູກສິດສິບສອງຄົນຄືການປະກາດຂ່າວດີແຫ່ງຄວາມຣອດຂອງພຣະເຢຊູເຈົ້າໃຫ້ແກ່ນານາຊາດ. ເພື່ອເຂົາຈະໄດ້ກັບມາຫາເປັນສິດຂອງພຣະອົງຜ່ານທາງສິນລ້າງບາບ ເດຊະພຣະນາມພຣະບິດາແລະພຣະບຸດແລະພຣະຈິດ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ